# ແຈ້ງການເຖິງຜູ້ຮັບເງິນຊ່ວຍເຫຼືອອາຫານເສີມຈູງໃຈເຮັດວຽກ (WINS) ຂອງ CALFRESH

# ສຳຄັນ – ກະລຸນາອ່ານ

WINS ແມ່ນໂຄງການເງິນຊ່ວຍເຫຼືອອາຫານເສີມ $10 ຕໍ່ເດືອນສຳລັບຄອບຄົວເຮັດວຽກຜູ້ທີ່ໄດ້ຮັບເງິນຊ່ວຍເຫຼືອ CalFresh ແຕ່ບໍ່ໄດ້ຮັບໂຄງການໃຫ້ໂອກາດການເຮັດວຽກ ແລະຄວາມຮັບຜິດຊອບຕໍ່ເດັກຂອງລັດຄາລິຟໍເນຍ (CalWORKs) ຫຼືເງິນຊ່ວຍເຫຼືອຂອງໂຄງການໃຫ້ຄວາມຊ່ວຍເຫຼືອຊົ່ວຄາວຂອງຊົນເຜົ່າແກ່ຄອບຄົວທີ່ຂາດແຄນ (TANF).

ກົດໝາຍລັດຄາລິຟໍເນຍຈັດສະໜອງໃຫ້ດັ່ງນີ້:

- ຄອບຄົວ CalFresh ທີ່ບັນລຸຕາມເງື່ອນໄຂຊົ່ວໂມງເຮັດວຽກສຳລັບ WINS, ແຕ່ບໍ່ໄດ້ຮັບໂຄງການ CalWORKs ຫຼື Tribal TANF, ອາດຈະມີສິດໄດ້ຮັບເງິນຊ່ວຍເຫຼືອອາຫານເພີ່ມ $10 ຕໍ່ເດືອນ.

  ເງື່ອນໄຂຊົ່ວໂມງເຮັດວຽກທີ່ຕ້ອງປະຕິບັດໄດ້ແມ່ນ:

  20 ຊົ່ວໂມງຕໍ່ອາທິດສຳລັບຄອບຄົວທີ່ມີພໍ່ແມ່ທີ່ຢູ່ໃນການຄຸ້ມຄອງຄົນໜຶ່ງ/ມີຜູ້ຊ່ວຍດູແລ ພ້ອມທັງຢ່າງໜ້ອຍມີເດັກນ້ອຍຜູ້ໜຶ່ງທີ່ມີອາຍຸຕ່ຳກວ່າຫົກປີ;

  30 ຊົ່ວໂມງຕໍ່ອາທິດສຳລັບຄອບຄົວທີ່ບໍ່ມີພໍ່ແມ່ທັງສອງຄົນ/ມີຜູ້ຊ່ວຍດູແລ ພ້ອມທັງມີເດັກນ້ອຍອາຍຸລະຫວ່າງຫົກຫາແປດປີ;

  35 ຊົ່ວໂມງຕໍ່ອາທິດສຳລັບຄອບຄົວທີ່ມີພໍ່ແມ່ທັງສອງຄົນ/ມີຜູ້ຊ່ວຍດູແລ.

  ວຽກທີ່ນັບແມ່ນວຽກທີ່ໄດ້ຮັບຄ່າຈ້າງ (ແມ້ວ່າມັນຈະເປັນວຽກທີ່ໄດ້ຮັບການທົດແທນກໍ່ຕາມ, ເຊັ່ນ ທັງຮຽນທັງເຮັດວຽກ). ອັນນີ້ລວມທັງການເຮັດວຽກສ່ວນຕົວນຳ.
- ຄອບຄົວຂອງທ່ານອາດຈະມີສິດໄດ້ຮັບ ຖ້າທ່ານ:
  - ເປັນຄອບຄົວ CalFresh, ແຕ່ບໍ່ໄດ້ຮັບໂຄງການ CalWORKs ຫຼື Tribal TANF; ແລະ
  - ມີເດັກນ້ອຍອາຍຸຕ່ຳກວ່າ 18 ປີຢູ່ໃນບ້ານ; ແລະ
  - ຢ່າງໜ້ອຍມີພໍ່ແມ່/ຜູ້ປົກຄອງຜູ້ໜຶ່ງຢູ່ໃນຄອບຄົວທີ່ບັນລຸໄດ້ຕາມການກຳນົດຂອງ TANF ຂອງ “ບຸກຄົນມີສິດເຮັດວຽກ”

ແລະກຳລັງເຂົ້າຮ່ວມໃນຊົ່ວໂມງເຮັດວຽກທີ່ພຽງພໍຕາມທີ່ໄດ້ເຮັດເປັນລາຍການໄວ້ຂ້າງເທິງ ຢູ່ໃນກິດຈະກຳການເຮັດວຽກທີ່ມີສິດ ທີ່ບັນລຸໄດ້ຕາມເງື່ອນໄຂກຳນົດໂຄງການ TANF ຂອງລັດຖະບານກາງ;

- ການເບີກຈ່າຍປະຈຳເດືອນນີ້ຈະສືບຕໍ່ໃຫ້ໄປຈົນເທົ່າທີ່ທ່ານບັນລຸຕາມເງື່ອນໄຂກຳນົດຂອງໂຄງການ WINS.
- ເງິນຊ່ວຍເຫຼືອ $10 ເປັນເງິນຊ່ວຍເຫຼືອທາງດ້ານອາຫານ ແລະບໍ່ສາມາດໃຊ້ເປັນເງິນສົດໄດ້.
- ຖ້າທ່ານຕ້ອງການຮູ້ເພີ່ມເຕີມ, ກະລຸນາຕິດຕໍ່ພະນັກງານຂອງທ່ານ.

ຄອບຄົວ CalFresh ທີ່ມີສິດໄດ້ຮັບແຕ່ລະຄອບຄົວອາດຈະໄດ້ຮັບເງິນຊ່ວຍເຫຼືອ WINS ຄັ້ງດຽວເທົ່ານັ້ນໃນແຕ່ລະເດືອນ. ເງິນຊ່ວຍເຫຼືອແມ່ນຈະຖືກເບີກຈ່າຍຕາມບັດໂອນເງິນຊ່ວຍເຫຼືອທາງອີເລັກໂທຣນິກ (EBT) ທີ່ມີຢູ່ຂອງຄອບຄົວເປັນອາຫານເສີມໃຫ້ກັບການຈັດແບ່ງ CalFresh ຂອງຄອບຄົວ. ການມີສິດໄດ້ຮັບເງິນຊ່ວຍເຫຼືອ WINS ຖືກກຳນົດໃຫ້ເມື່ອທ່ານສະໝັກ, ລາຍງານການປ່ຽນແປງ, ຫຼືການແກ້ໄຂເງິນຊ່ວຍເຫຼືອໃຫ້ຖືກຕ້ອງ. ຖ້າທ່ານມີເງື່ອນໄຂໄດ້ຮັບ WINS, ເງິນຊ່ວຍເຫຼືອຈະເອົາເພີ່ມເຂົ້າໃສ່ບັດ EBT ຂອງທ່ານ.

ກະລຸນາເບິ່ງໃຫ້ແນ່ໃຈວ່າ ໄດ້ລາຍງານຊົ່ວໂມງເຮັດວຽກຂອງທ່ານໃຫ້ກັບພະນັກງານດູແລການມີສິດໄດ້ຮັບທ່ານແລ້ວ ເມື່ອທ່ານສະໝັກຂໍ CalFresh ເທື່ອທຳອິດ, ເມື່ອທ່ານໄດ້ຮັບການຮຽກຮ້ອງໃຫ້ລາຍງານການປ່ຽນແປງຕ່າງໆ, ຫຼືເມື່ອທ່ານແກ້ໄຂເງິນຊ່ວຍເຫຼືອ CalFresh ໃຫ້ຖືກຕ້ອງ ເພື່ອໃຫ້ເຂົາເຈົ້າສາມາດກຳນົດໄດ້ວ່າ ທ່ານມີສິດໄດ້ຮັບບໍ່.

ຖ້າທ່ານຄິດວ່າ ພວກເຮົາຄິດໄລ່ເງິນຊ່ວຍເຫຼືອ CalFresh ຂອງທ່ານຜິດ ເນື່ອງຈາກເງິນຊ່ວຍເຫຼືອ WINS ໃໝ່ ທ່ານອາດຈະຂໍໃຫ້ມີການພິຈາລະນາສືບສວນຂອງລັດໄດ້ພາຍໃນ 90 ວັນ ເມື່ອທ່ານໄດ້ຮັບໜັງສືສະບັບນີ້ ໂດຍໃຫ້ຂຽນໄປຫາ:

ຫຼືທ່ານອາດຈະໂທຫາເບີເກັບເງິນປາຍທາງໄດ້ທີ່: 1-800-952-5253. ຖ້າທ່ານຫູໜວກ ແລະໃຊ້ TDD, ໃຫ້ໂທ 1-800-952-8349.
ເມື່ອທ່ານຂໍໃຫ້ມີການພິຈາລະນາສືບສວນຂອງລັດ, ທ່ານຕ້ອງບອກພວກເຮົາວ່າ ເປັນຫຍັງທ່ານຈຶ່ງຄິດວ່າ ພວກເຮົາເຮັດຜິດ. ຢູ່ໃນການພິຈາລະນາສືບສວນນັ້ນ ທ່ານສາມາດວ່າຄວາມເອົາເອງກໍ່ໄດ້ ຫຼືທ່ານສາມາດໃຫ້ໝູ່, ທະນາຍຄວາມ ຫຼືຄົນອື່ນເວົ້າແທນທ່ານກໍ່ໄດ້, ແຕ່ທ່ານຕ້ອງເອົາຄົນເຫຼົ່ານີ້ໄປເພື່ອຊ່ວຍທ່ານ.
ທ່ານອາດຈະຂໍການຊ່ວຍເຫຼືອທາງດ້ານກົດໝາຍຟຣີໄດ້ຢູ່ທີ່ຫ້ອງການຊ່ວຍເຫຼືອກົດໝາຍຢູ່ໃນພື້ນທີ່ຂອງທ່ານ